ເພື່ອການເຜີຍແຜ່

# ການປຶກສາຫາລືລ່ວງໜ້າຂອງໂຄງການ ຊະນະຄາມ ຈະເລີ່ມຕົ້ນ ພາຍຫຼັງສຳເລັດ ການປຶກສາຫາລື ໂຄງການຫຼວງພະບາງ ໃນເດືອນ ມິຖຸນາ

**ນະຄອນຫຼວງວຽງຈັນ, ສປປ ລາວ, ວັນທີ 5 ມິຖຸນາ 2020 -** ກອງປະຊຸມເພື່ອສະຫຼຸບຂັ້ນຕອນການປຶກສາຫາລືລ່ວງໜ້າ ຂອງໂຄງການເຂື່ອນໄຟຟ້າ ຫຼວງພະບາງ 1,460 ເມກາວັດ ທີ່ລັດຖະບານລາວ ໄດ້ສະເໜີ ໃຫ້ສ້າງໃນແມ່ນ້ຳຂອງ ຢູ່ທາງເໜືອ ຂອງແຂວງ ຫຼວງພະບາງ ໄດ້ເລື່ອນມາເປັນ ວັນທີ 30 ມິຖຸນາ, 2020, ໂດຍອີງຕາມການປະຊຸມຂອງຄະນະກຳມາທິການແມ່ນ້ຳຂອງ.

ອີງຕາມກອງປະຊຸມພິເສດຂອງຄະນະກຳມະການຮ່ວມ (ຄມສ), ເຊິ່ງຈັດຂຶ້ນມື້ວານນີ້ ທີ່ນະຄອນຫຼວງວຽງຈັນ ໂດຍຜ່ານການປະຊຸມທາງໄກ ລະບົບອອນລາຍ, ການຕັດສິນໃຈເລື່ອນດັ່ງກ່າວມີຂຶ້ນເພື່ອໃຫ້ ປະເທດສະມາຊິກ ມີເວລາຫລາຍຂຶ້ນ ເພື່ອປຶກສາຫາລື ແລະ ຕົກລົງກ່ຽວກັບມາດຕະການທີ່ແນະນຳ ເພື່ອຫລີກລ້ຽງ, ຫຼຸດຜ່ອນ ແລະ ບັນເທົາຄວາມສ່ຽງ ຜົນກະທົບທາງລົບ ຂ້າມຜ່ານຊາຍແດນຈາກໂຄງການ ດັ່ງທີ່ຂຽນໄວ້ໃນຖະແຫຼງການຂອງຄະນະກຳມະການຮ່ວມ ແລະ ແຜນປະຕິບັດງານຮ່ວມ.

ທ່ານ ປອ ສົມກຽດ ປຣະຈຳວົງ ປະທານຄະນະກຳມະການຮ່ວມ (ຄມສ) ປະຈຳປີ 2020 ແລະ ເປັນປະທານກອງປະຊຸມ, ໄດ້ກ່າວວ່າ "ຍ້ອນຄວາມກັງວົນ ແລະ ຄຳແນະນຳ ຈາກ ຣາຊະອານາ ຈັກກຳປູເຈຍ, ຣາຊະອານາຈັກໄທ, ແລະ ສສ ຫວຽດນາມ ແລະ ບັນດາພາກສ່ວນກ່ຽວຂ້ອງ ແມ່ນ້ຳຂອງ ແລະ ການຕົກລົງຈາກ ສປປ ລາວ, ພວກເຮົາໄດ້ຕັດສິນໃຈເລື່ອນວັນສະຫຼຸບ ຂະບວນການປຶກສາຫາລືລ່ວງໜ້າ ຂອງໂຄງການ ຫຼວງພະບາງ ອອກໄປ ໃນວັນທີ 30 ມິຖຸນານີ້".

ທ່ານ ປອ ສົມກຽດ ເຊິ່ງທ່ານກໍ່ຍັງໄດ້ດຳລົງຕຳແຫນ່ງ ເລຂາທິການ ສຳນັກງານ ຊັບພະຍາກອນນ້ຳ ແຫ່ງຣາຊະອານາຈັກໄທ ໄດ້ກ່າວຕື່ມອີກວ່າ "ການເລື່ອນວັນສະຫລຸບດັ່ງກ່າວແມ່ນເພື່ອເຮັດໃຫ້ ການສະຫຼຸບການປຶກສາຫາລືລ່ວງໜ້າ ມີຄວາມໝາຍຫຼາຍຂຶ້ນ ເພື່ອຮັບປະກັນວ່າ ບັນດາຄຳເຫັນ ແລະ ຄຳແນະນຳ ຈາກທຸກພາກສ່ວນ ທີ່ສະຫນອງໃຫ້ແກ່ ສປປ ລາວ ໄດ້ຖືກພິຈາລະນາຢ່າງລະອຽດ ເພື່ອແກ້ໄຂຜົນກະທົບຂ້າມຊາຍແດນທາງລົບທີ່ອາດເກີດຂຶ້ນຈາກເຂື່ອນ".

ໃນເດືອນ ກໍລະກົດ ປີທີ່ຜ່ານມາ, ລັດຖະບານ ລາວ ໄດ້ສົ່ງໂຄງການ ຫຼວງພະບາງ ເຊິ່ງເປັນການນຳໃຊ້ນ້ຳໃນອ່າງປະຈຳປີໃນຊ່ອງທາງຂອງແມ່ນ້ຳຂອງສາຍຫຼັກ, ເຊິ່ງຕ້ອງຜ່ານຂັ້ນຕອນການປຶກສາຫາລືລ່ວງໜ້າ ຂອງ ຄມສ. ຂະບວນການ 6 ເດືອນໄດ້ດຳເນີນໄປຢ່າງເປັນທາງການ ໃນວັນທີ 8 ຕຸລາ 2019 ແລະ ກຳນົດຈະສິ້ນສຸດລົງ ໃນວັນທີ 7 ເມສາ, ແຕ່ເນື່ອງຈາກ ໂລກລະບາດ Covid-19, ຄະນະກຳມະການຮ່ວມ ຂອງ ຄມສ ສາມາດປະຊຸມກັນໄດ້ແຕ່ໃນວັນທີ 4 ມິຖຸນານີ້.

ເຂື່ອນໄຟຟ້າ ຫຼວງພະບາງແມ່ນໂຄງການທີ 5 ທີ່ໄດ້ຮັບການສະເໜີ ຕໍ່ຂັ້ນຕອນຂະບວນການປຶກສາຫາລືລ່ວງໜ້າ ຂອງ ຄມສ. ຕັ້ງຢູ່ຫ່າງຈາກຕົວເມືອງ ຫຼວງພະບາງ ປະມານ 25 ກິໂລແມັດ, ໂຄງການຈະຖືກພັດທະນາໂດຍບໍລິສັດ ພະລັງງານ ຫຼວງພະບາງ ຈຳກັດ - ບໍລິສັດ ທີ່ສ້າງຕັ້ງຂຶ້ນໂດຍ ລັດຖະບານລາວ ແລະ ກຸ່ມບໍລິສັດ ຮ່ວມມືພະລັງງານ ປຣີໂຕ ຫວຽດນາມ ພາຍໃຕ້ MOU ໃນປີ 2007.

**ຂະບວນການປຶກສາຫາລືລ່ວງໜ້າ ຂອງ ໂຄງການ ຊະນະຄາມ ຈະເລີ່ມຕົ້ນພາຍຫຼັງ ສຳເລັດ ຂະບວນການປຶກສາຫາລືລ່ວງໜ້າ ໂຄງການ ຫຼວງພະບາງ**

ຄະນະກຳມະການຮ່ວມຍັງໄດ້ລະບຸເຖິງ ຂັ້ນຕອນການປຶກສາຫາລືລ່ວງໜ້າ ສຳລັບໂຄງການເຂື່ອນ ໄຟຟ້ານ້ຳຕົກ ຊະນະຄາມ ຄັ້ງຫຼ້າສຸດຈະມີຂຶ້ນເມື່ອການປຶກສາຫາລື ໂຄງການ ຫຼວງພະບາງ ໄດ້ບັນລຸຜົນສຳເລັດແລ້ວ, ເຊິ່ງເປັນການຕັດສິນໃຈດຽວກັນທີ່ຄະນະກຳມະການໄດ້ດຳເນີນການໃນທ້າຍປີກາຍ.

ລັດຖະບານ ລາວ ໄດ້ສົ່ງໂຄງການ ຊະນະຄາມ 684 ເມກາວັດ ສຳລັບຂັ້ນຕອນການປຶກສາຫາລືລ່ວງໜ້າ ໃນວັນທີ 9 ກັນຍາ 2019, ພາຍຫຼັງທີ່ໄດ້ຍື່ນສະເໜີ ໂຄງການ ເຂື່ອນໄຟຟ້າ ຫຼວງພະບາງ. ແຕ່ຍ້ອນວ່າການປຶກສາຫາລືຂອງ ໂຄງການ ຫຼວງພະບາງ ຍັງດຳເນີນຢູ່ໃນເວລານັ້ນ, ຄະນະກຳມະການຮ່ວມ ໄດ້ຕັດສິນໃຈເບິ່ງໂຄງການ ຊະນະຄາມ ໃນ ເດືອນ ມິຖຸນາ ຫຼື ຫລັງຈາກສິ້ນສຸດ ກໍລະນີ ຂອງ ໂຄງການ ເຂື່ອນໄຟຟ້າ ຫຼວງພະບາງ ແລ້ວ, ເພື່ອອະນຸຍາດໃຫ້ມີການກວດກາຢ່າງລະອຽດຫຼາຍຂຶ້ນ.

ເຂື່ອນໄຟຟ້າ ຊະນະຄາມແມ່ນໂຄງການທີ 6 ທີ່ໄດ້ສະເໜີ ຕໍ່ຂັ້ນຕອນການປຶກສາຫາລືລ່ວງໜ້າຂອງ ຄມສ. ສະຖານທີ່ທີ່ຖືກສະເໜີ ແມ່ນຕັ້ງຢູ່ທາງທິດເໜືອ ຂອງນະຄອນຫຼວງວຽງຈັນ ປະມານ 155 ກິໂລແມັດ ແລະ ຄາດວ່າຈະມີມູນຄ່າ 2,073 ລ້ານໂດລາສະຫະລັດ. ເຂື່ອນດັ່ງກ່າວຈະຖືກພັດທະນາໂດຍ ບໍລິສັດ ພະລັງງານ ໄຟຟ້ານ້ຳຕົກ ດາຖັງ (ລາວ) ຊະນະຄາມ, ເຊິ່ງເປັນ ບໍລິສັດ ສາຂາ ຂອງບໍລິສັດຜະລິດໄຟຟ້າ ດາຖັງ ສາກົນ ຂອງຈີນ.

ຂະບວນການປຶກສາຫາລືລ່ວງໜ້າ ຂອງ ຄມສ ກຳນົດໃຫ້ມີແບ່ງປັນບົດລາຍງານ, ເປີດເຜີຍຂໍ້ມູນຂ່າວສານ ແລະການປະເມີນຜົນຢ່າງກວ້າງຂວາງ ຂອງໂຄງການພື້ນຖານໂຄງລ່າງທີ່ສຳຄັນແຫ່ງຊາດ ທີ່ຈະສ້າງໃນແມ່ນ້ຳຂອງ, ໂດຍ

ມີການທົບທວນ ໂດຍ ຄມສ ແລະ ພາກສ່ວນກ່ຽວຂ້ອງ, ການພິຈາລະນາ ແລະ ປັບປຸງການອອກແບບໂຄງການ, ແລະ ການຕິດຕາມຮ່ວມກັນເພື່ອຕິດຕາມຜົນກະທົບ ທີ່ຕ້ອງໄດ້ຮັບການແກ້ໄຂ ເຊິ່ງເປັນສ່ວນໜຶ່ງຂອງການຄຸ້ມຄອງແບບປັບຕົວ.

ເປົ້າໝາຍເພື່ອສ້າງຄວາມສົມດຸນລະຫວ່າງຄວາມຕ້ອງການດ້ານການພັດທະນາ ແລະ ການປົກປ້ອງສິ່ງແວດລ້ອມ ແລະ ສັງຄົມ.

ຫົວໜ້າກອງເລຂາ ຄມສ, ທ່ານ ປອ ອັນ ພິສ ຮັດດະ ໄດ້ກ່າວວ່າໃນທີ່ປະຊຸມວ່າ "ຈຸດປະສົງທັງໝົດນີ້ ແມ່ນເພື່ອໃຫ້ ປະເທດທີ່ສະເໜີໂຄງການ ເຂົ້າມາມີສ່ວນຮ່ວມ ແລະ ມີຄວາມຮັບຜິດຊອບ. ການທີ່ບໍ່ມີ (ຄມສ) ແລະ ຂັ້ນຕອນການປຶກສາຫາລືລ່ວງໜ້າ ຈະເຮັດໃຫ້ໂຄງການ ຕ່າງໆ ໃນແມ່ນ້ຳຂອງ ທີ່ອາດມີຜົນກະທົບຂ້າມຊາຍແດນທີ່ສຳຄັນດຳເນີນການ ໂດຍບໍ່ມີການເປີດເຜີຍຂໍ້ມູນຢ່າງກ້ວາງຂວາງ ຫຼື ການທົບທວນໂດຍ ສາທາລະນະ,".

**ໝາຍເຫດ:**
ຄະນະກຳມາທິການແມ່ນ້ຳຂອງສາກົນ ແມ່ນ ອົງການຈັດຕັ້ງ ລະຫວ່າງລັດຖະບານ ເພື່ອການປຶກສາຫາລື ແລະ ການຮ່ວມມື ໃນອ່າງແມ່ນ້ຳຂອງຕອນລຸ່ມ, ສ້າງຕັ້ງຂຶ້ນໃນປີ 1995 ອີງຕາມສັນຍາແມ່ນ້ຳຂອງ ລະຫວ່າງ ຣາຊະອານາຈັກກຳປູເຈຍ, ສປປ ລາວ , ຣາຊະອານາຈັກໄທ, ແລະ ສສ ຫວຽດນາມ. ອົງການດັ່ງກ່າວເປັນກົນໄກລະດັບພາກພື້ນເພື່ອການຮ່ວມມື ກ່ຽວກັບນ້ຳ ແລະ ທັງເປັນ ສູນກາງຄວາມຮູ້ ການຄຸ້ມຄອງຊັບພະຍາກອນນ້ຳເພື່ອການພັດທະນາທີ່ຍືນຍົງ ຂອງ ພາກພື້ນ.

- **ຈົບ** -

**ຂໍ້ມູນເພີ່ມເຕີມ, ກະລຸນາຕິດຕໍ່** :
ທ່ານ ໂສພຽກ ແມ, ເຈົ້າໜ້າທີ່ ການ ຂ່າວສື່ສານ,
ກອງເລຂາ ຄະນະກຳມາທິການແມ່ນ້ຳຂອງສາກົນ
ອີເມວ: sopheak@mrcmekong.org
ມືຖື : +856-20-77779168

###